## ຂໍ້ມູນການ ສັກຢາ Corona 19 ສໍາລັບຄົນຕ່າງປະເທດອາຍຸ 75 ປີຂຶ້ນໄປ

□ ມີສິດໄດ້ຮັບ: ຄົນຕ່າງປະເທດທີ່ມີອາຍຸ 75 ປີຂຶ້ນໄປ (ເກີດກ່ອນວັນທີ 31 ເດືອນທັນວາ ປີ1946) ເປັນຜູ້ທີ່ພັກຢູ່ປະເທດເກົາຫຼີເປັນເວລາດົນ (ຫຼາຍກວ່າ 90 ວັນ)

□ ປະເພດວັກຊີນ: ຢາວັກຊີນ Comirnaty (Pfizer / BioNTech) COVID-19

※ ສີດວັກຊີນ ສອງຄັ້ງ, ໄລຍະຫ່າງກັນ 21 ວັນ

□ ສະຖານທີ່ສັກຢາວັກຊີນ: ສູນສັກຢາວັກຊີນປ້ອງກັນໂຣກ Corona 19 ຂອງລັດຖະບານທ້ອງຖິ່ນ (ນະຄອນ, ເຂດປົກຄອງ, ເມືອງ)

※ເນື່ອງຈາກເວລາເລີ່ມຕົ້ນຂອງການປະຕິບັດງານແມ່ນແຕກຕ່າງກັນ ສໍາລັບແຕ່ລະເຂດ, ພວກເຮົາຈະແຈ້ງໃຫ້ທ່ານຊາບ ຕ່າງຫາກ ເມື່ອສະໝັກ ການສັກຢາ.

□ ຂັ້ນຕອນການສັກຢາວັກຊີນ

① ໃບສະໝັກ ສັກຢາວັກຊີນ (ເດືອນເມສາ ເຖິງ ເດືອນມິຖຸນາ): ສົ່ງແບບຟອມຍິນຍອມການສັກຢາວັກຊີນ ໄປທີ່ ສູນກາງຊຸມຊົນ ອຶບມຽນດົງ ຈູມິນເຊັນເຕີ (ຕາມຫຼັກການແລ້ວ ຂໍແນະນໍາ ໃຫ້ສົ່ງເອກະສານດ້ວຍຕົວເອງ)

※ ຜູ້ທີ່ຢູ່ອາໄສໄລຍະຍາວ ທີ່ບໍ່ມີເລກທະບຽນຄົນຕ່າງດ້າວແລະຜູ້ທີ່ຖືກຍົກເວັ້ນຈາກການລົງທະບຽນຄົນຕ່າງດ້າວ (ມາດຕາ 31 (1) ຂອງກົດໝາຍ ວ່າດ້ວຍການເຂົ້າເມືອງ」)
ສາມາດສະໝັກ ສັກຢາວັກຊີນໄດ້ທີ່ ສູນກາງຊຸມຊົນ ອຶບມຽນດົງ ຈູມິນເຊັນເຕີ ຫຼັງຈາກໄດ້ຮັບໝາຍເລກການຄຸ້ມຄອງຊົ່ວຄາວຈາກສຸກສາລາສາທາລະນະ (ກະລຸນາຖືເອກະສານຕິດຕົວໄປນໍາ ເຊັ່ນ: ໜັງສືເດີນທາງຂອງທ່ານ, ບັດປະຈໍາຕົວ)

② ການຢັ້ງຢືນວັນທີສັກຢາວັກຊີນ: ສູນກາງການບໍລິການຊຸມຊົນອຶບມຽນດົ່ງ ຈູມິນເຊັນເຕີ້ ເປັນຜູ້ໃຫ້ຂໍ້ມູນສ່ວນບຸກຄົນໂດຍທາງໂທລະສັບຫຼືຂໍ້ຄວາມ

③
ການຈັດຕັ້ງປະຕິບັດການສັກຢາວັກຊີນ: ເດີນທາງໄປທີ່ສູນສັກຢາວັກຊີນໃນເວລາທີ່ໄດ້ຮັບຂໍ້ມູນແລະໄດ້ຮັບການສັກຢາ ວັກຊີນຄັ້ງ ທາອິດ, ແລະຫຼັງຈາກນັ້ນອີກປະມານ 21 ວັນໃຫ້ກັບຄືນໄປອີກ ເພື່ອຮັບການສັກຢາວັກຊີນຄັ້ງທີສອງ.

※ກະລຸນາຖືເອົາບັດປະຈໍາຕົວຂອງທ່ານໄປນໍາເມື່ອທ່ານໄປສັກຢາວັກຊີນ

④ ການບໍລິຫານຈັດການຫລັງການສັກຢາວັກຊີນ: ກະລຸນາເອົາໃຈໃສ່ສັງເກດເບິ່ງສະພາບສຸຂະພາບຂອງທ່ານ ເປັນເວລາຢ່າງ ໜ້ອຍ 3 ມື້ຫຼັງຈາກການສັກຢາວັກຊີນ.

※ຖ້າມີອາການໄຂ້ຫລືເຈັບກ້າມເນື້ອເປັນເວລາດົນກວ່າ 3 ມື້, ໃຫ້ໄປພົບແພດຢູ່ສະຖາບັນການແພດ, ແລະຖ້າມີອາການແພ້ຢ່າງຮຸນແຮງ, ໃຫ້ໄປທີ່ຫ້ອງສຸກເສີນທັນທີ.

□ ສອບຖາມຂໍ້ມູນ

○ ສູນຄວບຄຸມແລະປ້ອງກັນພະຍາດຂອງເກົາຫລີ ☏1339 (ການແນະນໍາເປັນພາສາຕ່າງປະເທດ)

○ ທີ່ຢູ່, ສູນກາງບໍລິການຊຸມຊົນ ອຶບມຽນດົ່ງ ຈູມິນເຊັນເຕີ້

<ບົດຄວາມນີ້ແປໂດຍສູນດານູລີ ໂທ 1577-1366.>